**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ　　　　　　　　ເລກທີ.......58......./ຖວທ

ນະຄອນຫຼວງວຽງຈັນ, ວັນທີ.29/01/2020......

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງໜ່ວຍງານຊ່ວຍວຽກ ຄະນະຮັບຜິດຊອບຊີ້ນຳການພັດທະນາເຂດຈຸດສຸມໃຈກາງ ເສດຖະກິດແຂວງໄຊສົມບູນ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 95/ນຍ, ລົງວັນທີ 9 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກຂອງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
- ອີງຕາມ ຂໍ້ຕົກລົງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການແຕ່ງຕັ້ງຄະນະຊ່ວຍວຽກຄະນະຮັບຜິດຊອບຊີ້ນຳການພັດທະນາເຂດຈຸດສຸມໃຈກາງ ແຂວງໄຊສົມບູນ ສະບັບເລກທີ 01/ຄຊຈສ, ລົງວັນທີ 26 ມີນາ 2019;
- ອີງຕາມ ດຳລັດວ່າດ້ວຍ ການພັດທະນາເສດຖະກິດແຂວງໄຊສົມບູນ ສະບັບເລກທີ 414/ລບ, ລົງວັນທີ 10 ທັນວາ 2019.

## ລັດຖະມົນຕີ ຕົກລົງ:

**ມາດຕາ 01**: ແຕ່ງຕັ້ງຄະນະຊີ້ນຳ ໃນການເຮັດວຽກຊ່ວຍຄະນະຮັບຜິດຊອບຊີ້ນຳການພັດທະນາເຂດຈຸດສຸມໃຈກາງ ແຂວງ ໄຊສົມບູນ ຂອງກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ປະກອບມີລາຍຊື່ດັ່ງນີ້:

| | | |
|---|---|---|
| 1. ທ່ານ ອຸ່ນທອງ ຂາວພັນ | ຮອງລັດຖະມົນຕີ | ເປັນຫົວໜ້າ |
| 2. ທ່ານ ວັນສີ ກົວມົວ | ຫົວໜ້າຫ້ອງການກະຊວງ | ເປັນຮອງ |
| 3. ທ່ານ ນາງ ແພງຈັນ ແພງເມືອງ | ຫົວໜ້າກົມແຜນການ-ການເງິນ | ເປັນຮອງ |
| 4. ທ່ານ ປິ່ນປາດຖະໜາ ພັນທະມາລີ | ຫົວໜ້າກົມສື່ມວນຊົນ | ເປັນຄະນະ |
| 5. ທ່ານ ປອ. ອາລຸນ ບຸນມີໄຊ | ຫົວໜ້າກົມພັດທະນາການທ່ອງທ່ຽວ | ເປັນຄະນະ |
| 6. ທ່ານ ສູນ ມະນີວົງ | ຫົວໜ້າກົມໂຄສະນາການທ່ອງທ່ຽວ | ເປັນຄະນະ |
| 7. ທ່ານ ບຸນມາ ເຜີດສາວົງ | ຫົວໜ້າກົມຄຸ້ມຄອງການທ່ອງທ່ຽວ | ເປັນຄະນະ |
| 8. ທ່ານ ນາງ ຈັນເພັດ ຄຳຟອງ | ຫົວໜ້າກົມວັດທະນະທຳມະຫາຊົນ | ເປັນຄະນະ |

**ຄະນະຊີ້ນຳລວມ ມີໜ້າທີ່:** ຊີ້ນຳຄະນະວິຊາການໃນການ ສຳຫຼວດ, ສຶກສາ, ຄົ້ນຄວ້າ, ສ້າງ ແລະ ປະຕິບັດກິດຈະກຳ ທາງດ້ານວິຊາການຂອງຂະແໜງການທີ່ຕົນຮັບຜິດຊອບ ເພື່ອຊຸກຍູ້ການພັດທະນາຈຸດສຸມເສດຖະກິດແຂວງ ໄຊສົມບູນ. ບົນພື້ນຖານການຜັນຂະຫຍາຍດຳລັດເລກທີ 414 ວ່າດ້ວຍນະໂຍບາຍການພັດທະນາເສດຖະກິດ ແຂວງ ໄຊສົມບູນ, ລົງວັນທີ 10 ທັນວາ 2019.

**ມາດຕາ 02:** ຄະນະວິຊາການ ຊ່ວຍວຽກ, ປະສານງານ ແລະ ດຳເນີນການຈັດຕັ້ງປະຕິບັດ ກິດຈະກຳຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ປະກອບມີລາຍຊື່ດັ່ງນີ້:

| | | | |
|---|---|---|---|
| 1. | ທ່ານ ປອ. ອຳຄາ ວົງໝື່ນກ້າ | ຮອງຫົວໜ້າກົມແຜນການ-ການເງິນ | ເປັນຫົວໜ້າ |
| 2. | ທ່ານ ນາງ ພອນມະລີ ອິນທະພົມ | ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ | ເປັນຮອງ |
| 3. | ທ່ານ ໄຊສົມບັດ ບຸນນະພົນ | ຮອງຫົວໜ້າກົມຄຸ້ມຄອງການທ່ອງທ່ຽວ | ເປັນຄະນະ |
| 4. | ທ່ານ ນາງ ດາລານີ ພົມມະວົງສາ | ຮອງຫົວໜ້າ ສສວທ | ເປັນຄະນະ |
| 5. | ທ່ານ ນາງ ແສງໂສດາ ວັນທານຸວົງ | ຮອງຫົວໜ້າກົມໂຄສະນາການທ່ອງທ່ຽວ | ເປັນຄະນະ |
| 6. | ທ່ານ ໂອເງິນ ປັນຍານຸວົງ | ຫົວໜ້າພະແນກ,ກົມພັດທະນາການທ່ອງທ່ຽວ | ເປັນຄະນະ |
| 7. | ທ່ານ ພູວຽງ ສີນວນນ້ອຍ | ຫົວໜ້າພະແນກ, ກົມສື່ມວນຊົນ | ເປັນຄະນະ |
| 8. | ທ່ານ ນາງ ສີພອນໄພ ສິດທິໄຊ | ຫົວໜ້າພະແນກ, ກົມຄຸ້ມຄອງການທ່ອງທ່ຽວ | ເປັນຄະນະ |
| 9. | ທ່ານ ນາງ ເພັນປະພາ ພົງສາ | ຫົວໜ້າພະແນກ, ສສວທ | ເປັນຄະນະ |
| 10. | ທ່ານ ນາງ ພອນມະນີ ສຸຂະທຳມະວົງ | ຮອງຫົວໜ້າພະແນກ, ກົມພັດທະນາການທ່ອງທ່ຽວ | ເປັນຄະນະ |
| 11. | ທ່ານ ລິດທິສັກ ວໍລະລາດ | ຮອງຫົວໜ້າພະແນກ, ກົມໂຄສະນາການທ່ອງທ່ຽວ | ເປັນຄະນະ |
| 12. | ທ່ານ ສົມຈິດ ພັນລັກ | ຮອງຫົວໜ້າພະແນກ, ຫ້ອງການກະຊວງ | ເປັນຄະນະ |
| 13. | ທ່ານ ສາຍສະໝອນ ສິງບັນດິດ | ຮອງຫົວໜ້າພະແນກ, ກົມແຜນການ-ການເງິນ | ເປັນຄະນະ |
| 14. | ທ່ານ ສຸວັນນີກອນ ຜາຕັນ | ວິຊາການ, ກົມພັດທະນາການທ່ອງທ່ຽວ | ເປັນຄະນະ |
| 15. | ທ່ານ ພອນສຸກ ໄຊສົມພັນ | ວິຊາການ,ກົມພັດທະນາການທ່ອງທ່ຽວ | ເປັນຄະນະ |
| 16. | ທ່ານ ສີສົມພອນ ສະຣິດທິລາດ | ວິຊາການ, ກົມຄຸ້ມຄອງການທ່ອງທ່ຽວ | ເປັນຄະນະ |
| 17. | ທ່ານ ສົມພົງ ພູມວິສິດ | ວິຊາການ, ກົມໂຄສະນາການທ່ອງທ່ຽວ | ເປັນຄະນະ |
| 18. | ທ່ານ ນາງ ບົວລະພັນ ພັນຍານຸວົງ | ວິຊາການ, ກົມວັດທະນະທຳມະຫາຊົນ | ເປັນຄະນະ |

**ຄະນະວິຊາການ ມີໜ້າທີ່:**

- ປະສານສົມທົບກັບພາກສ່ວນກ່ຽວຂ້ອງຕາມການຊີ້ນຳຂອງ ຄະນະຊີ້ນຳ ໃນການກະກຽມການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍດຳລັດນາຍົກລັດຖະມົນຕີ ວ່າດ້ວຍນະໂຍບາຍການພັດທະນາເສດຖະກິດແຂວງ ໄຊສົມບູນ;
- ຄົ້ນຄວ້າ, ສ້າງແຜນວຽກ, ແຜນງານ, ໂຄງການ ແລະ ງົບປະມານໃຫ້ຕິດພັນກັບແຜນວຽກພັດທະນາຈຸດສຸມຂອງຂະແໜງການຕົນຢູ່ແຂວງ ໄຊສົມບູນ ໃນແຕ່ລະໄລຍະຕາມພາລະບົດບາດຂອງຂະແໜງການວິຊາສະເພາະ ແລະ ນຳໃຊ້ງົບປະມານໃຫ້ມີປະສິດທິຜົນ.

**ມາດຕາ 03:** ສຳລັບງົບປະມານໃນການລົງເຄື່ອນໄຫວວຽກງານຂ້າງເທິງ ແມ່ນນຳໃຊ້ງົບປະມານຂອງຂະແໜງການຕົນເອງ ໂດຍ ຂຶ້ນແຜນທີ່ຕິດພັນກັບວຽກວິຊາການຂອງ ກົມ ກອງ ທີ່ກຳນົດໃນແຜນປີ ແມ່ນໃຫ້ຖືກຕ້ອງຕາມລະບຽບຂອງການເງິນ.